ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ

ເລກທີ ...298../ປກສ.ນວ

ນະຄອນຫຼວງວຽງຈັນ, ລົງວັນທີ 20...ພຶດສະພາ.2024

# ສັນຍາຮ່ວມມື

## ວ່າດ້ວຍ ການສ້າງລະບົບຄຸ້ມຄອງອາຊີບ ແລະ ພາຫະນະພິເສດ

## ລະຫວ່າງ

ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ, ສຳນັກງານຕັ້ງ ຢູ່ຖະໜົນ T4 ບ້ານ ໂພນປາເປົ້າ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ ຕາງໜ້າ ໂດຍ ທ່ານ ພັອ ແສງທອງ ເກື້ອບຸນລ່ຳ ຮອງຫົວໜ້າ ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໂທລະສັບ 020 55510006 ຕໍ່ໄປ ເອີ້ນວ່າ: ຝ່າຍ (ກ).

## ກັບ

ບໍລິສັດ ໄຊສະມາດເທັກ ຈຳກັດຜູ້ດຽວ, ສຳນັກງານຕັ້ງ ຢູ່ຖະໜົນທາງ ຮ່ອມ ບ້ານທົ່ງຕູມ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ ຕາງໜ້າ ໂດຍ ທ່ານ ນາງ ສຸດາວັນ ສຸກຂະສິງ ອາຍຸ 30 ປີ, ເຊື້ອຊາດລາວ, ສັນຊາດລາວ ອາຊີບ ນັກທຸລະກິດ ປັດຈຸບັນຢູ່ ບ້ານ ໜອງບົວທອງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເບີໂທລະສັບ 020 99985881 ຕໍ່ໄປເອີ້ນວ່າ ຝ່າຍ (ຂ).

ບ່ອນອີງ:

- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 653 /ປກສ, ລົງວັນທີ 08 ພຶດສະພາ 2012 ວ່າດ້ວຍ ການຄຸ້ມຄອງອາຊີບ ແລະ ພາຫະນະພິເສດ.
- ອີງຕາມ ຄຳແນະນຳ ສະບັບເລກທີ 05/ປກສ, ລົງວັນທີ 23 ກຸມພາ 2022 ວ່າດ້ວຍ ການຈັດຕັ້ງຜັນຂະຫຍາຍ ລັດຖະບັນຍັດ ເລກທີ 002/ປປທ ກ່ຽວກັບການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງປ້ອງກັນຄວາມສະຫງົບ.
- ອີງຕາມ ແຈ້ງການ ສະບັບເລກທີ 07/ຫວນວ, ລົງວັນທີ 7 ກຸມພາ 2024 ວ່າດ້ວຍ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ ຕິດພັນກັບການເກັບລາຍຮັບ ຕາມລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2022 ແລະ ຄຳແນະນຳ ສະບັບເລກທີ 05/ປກສ, ລົງວັນທີ 23 ກຸມພາ 2022.

ທັງສອງຝ່າຍ ໄດ້ຕົກລົງເຫັນດີ ເປັນເອກະພາບເຮັດສັນຍາຮ່ວມມືກັນ ດັ່ງມີລາຍລະອຽດລຸ່ມນີ້:

**ມາດຕາ 1: ວ່າດ້ວຍຈຸດປະສົງ ຂອງສັນຍາຮ່ວມມື**

ສັນສະຍາສະບັບນີ້ເອີ້ນວ່າ: ສັນຍາຮ່ວມມື ທັງສອງຝ່າຍ ຈຸດປະສົງ ເພື່ອພັດທະນາລະບົບ ການຄຸ້ມຄອງອາຊີບ ແລະ ພາຫະນະພິເສດ ຕິດພັນກັບການເກັບລາຍຮັບ ຕາມລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ແລະ ຄຳແນະນຳ 05/ປກສ, ລົງວັນທີ 23 ກຸມພາ 2022 ເພື່ອເປັນການນຳໃຊ້ລະບົບ ຄຸ້ມຄອງດ້ວຍເຄື່ອງມື ແລະ ອຸປະກອນທີ່ທັນສະໄໝ ເຂົ້າໃນການປະກອບອາຊີບ ແລະ ພາຫະນະພິເສດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດ, ວິສະຫະກິດ ແລະ ການບໍລິການຕ່າງໆ ທີ່ມີຄວາມສ່ຽງຕໍ່ຄວາມບໍ່ສະຫງົບ ກໍ່ໃຫ້ເກີດອາດສະຍາກຳທຸກຮູບແບບ, ສິ່ງພົນກະທົບຕໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງ



Scanned with CamScanner

ສິງຄົມ ເຮັດໃຫ້ບັນດາອາຊີບ ແລະ ພາຫະນະ ບໍ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ, ກວດກາເປັນພິເສດຂອງກຳລັງປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໂດຍປະຕິບັດຕາມນິຕິກຳ ສະບັບເລກທີ 653/ປກສ, ລົງວັນທີ 08 ພຶດສະພາ 2012, ສະບັບເລກທີ 05/ປກສ, ລົງວັນທີ 23 ກຸມພາ 2022, ສະບັບເລກທີ 07/ຫວນວ, ລົງວັນທີ 7 ກຸມພາ 2024 ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ທັງສອງຝ່າຍ ສ້າງສັນຍາສະບັບນີ້ຂຶ້ນ ມາບົນພື້ນຖານ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັນ ມີຄວາມເປັນເອກະພາບ ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້.

**ມາດຕາ 2: ຊື່ ແລະ ທີ່ຕັ້ງໂຄງການ**

2.1. ຊື່ໂຄງການ: ຮ່ວມພັດທະນາ ແລະ ສ້າງລະບົບຄຸ້ມຄອງອາຊີບ ແລະ ພາຫະນະພິເສດ ດ້ວຍລະບົບທີ່ທັນສະໄໝ ຂອງກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໂດຍ ແມ່ນ ຫ້ອງ ຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ.

2.2. ທີ່ຕັ້ງໂຄງການ: ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໂດຍ ແມ່ນ ຫ້ອງ ຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານເປັນຜູ້ຊີ້ນຳຈັດຕັ້ງປະຕິບັດຕົວຈິງ ຮ່ວມກັບ ບໍລິສັດໄຊສະມາດເທັກຈຳກັດຜູ້ດຽວ ແລະ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດ, ວິສະຫະກິດ ແລະ ການບໍລິການຕ່າງໆທີ່ດຳເນີນທຸລະກິດກ່ຽວກັບອາຊີບ ແລະ ພາຫະນະພິເສດ.

**ມາດຕາ 03: ກິດ ຈະກຳການລົງທຶນ ຂອງບໍລິສັດ**

**3.1. ບໍລິສັດ**

**3.1.1. ກິດ ຈະກຳການລົງທຶນຂອງບໍລິສັດ**

| ລ/ດ | ລາຍການ ກິດຈະກຳ | ລາຄາ | ເປັນເງິນ |
|---|---|---|---|
| 1 | ສ້າງລະບົບຄຸ້ມຄອງ | 1.630.000 ໂດລາ | 1.630.000 ໂດລາ |
| 2 | ອຸປະກອນຮັບໃຊ້ ທັງໝົດ | 300.000 ໂດລາ | 300.000 ໂດລາ |
| 3 | ພາຫະນະຮັບໃຊ້ | 50.000 ໂດລາ | 50.000 ໂດລາ |
| 4 | ສະຖານທີ່ (ຫ້ອງການ) | 10.000 ໂດລາ | 10.000 ໂດລາ |
| | ລວມ | | 2.000.000 ໂດລາ |

(ຂຽນເປັນຕົວໜັງສື: ສອງລ້ານໂດລາ)

3.1.2. ບໍລິສັດ ໄຊສະມາດເທັກ ຈຳກັດຜູ້ດຽວ ເປັນຜູ້ສະໜອງທາງດ້ານ ງົບປະມານ ສ້າງລະບົບ ຄຸ້ມຄອງອາຊີບ ແລະ ພາຫະນະພິເສດ ທັງໝົດ 2.000.000 ໂດລາ

(ມູນຄ່າການລົງທຶນທັງໝົດຂອງໂຄງການພັດທະນາສ້າງລະບົບການຄຸ້ມຄອງອາຊີບ ແລະ ພາຫະນະພິເສດ ມູນຄ່າທັງໝົດ 2.000.000 ໂດລາ(ສອງລ້ານ ໂດລາ)

3.1.2. ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ

ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ເປັນຜູ້ສະໜອງ ທາງດ້ານຂໍ້ມູນ ແລະ ສະຖານທີ່ຄຸ້ມຄອງລະບົບ ຢູ່ໃນນະຄອນຫຼວງວຽງຈັນ ພ້ອມທັງເອື້ອອຳນວຍຄວາມສະດວກຮອບດ້ານ ໃນການຈັດຕັ້ງປະຕິບັດ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ດຳເນີນທຸລະກິດ ກ່ຽວກັບອາຊີບ ແລະ ພາຫະນະພິເສດ.

**ມາດຕາ 4: ກຳນົດເວລາຂອງການຮ່ວມມື ແລະ ວິທີການຈັດຕັ້ງປະຕິບັດ.**



Scanned with CamScanner

ທັງສອງຝ່າຍ ຕົກລົງຮ່ວມມືກັນ ເປັນເວລາ 25 ປີ ແລະ ມີສິດໃນການຕໍ່ສັນຍາ ໂດຍບໍ່ຈຳກັດເວລາ ໂດຍເລີ່ມລົງມືຈັດຕັ້ງປະຕິບັດນັບແຕ່ ວັນທີ 20 ພຶດສະພາ 2024 ຫາວັນທີ 20 ພຶດສະພາ 2049 ສ່ວນການຈັດຕັ້ງປະຕິບັດ ມອບໃຫ້ ຫ້ອງ ຄຸ້ມຄອງສຳນະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຜູ້ປະສານສົມທົບຮ່ວມກັບບໍລິສັດ ໄຊສະມາດເທັກ ຈຳກັດຜູ້ດຽວ ເປັນຜູ້ດຳເນີນການ ຕາມກົນໄກ, ຂັ້ນຕອນ ແລະ ລະບຽບການ ເພື່ອຈັດຕັ້ງປະຕິບັດຕົວຈິງໃຫ້ປະສົບຜົນສຳເລັດຕາມກາດໝາຍທີ່ຕັ້ງໄວ້.

**ມາດຕາ 5: ວ່າດ້ວຍໜ້າທີ່ ແລະ ສິດ.**

**5.1. ໜ້າທີ່ ແລະ ສິດ (ຝ່າຍ ກ).**

5.1.1. ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳ ແລະ ຜູ້ປະສານງານ ຮ່ວມກັບ ບໍລິສັດ ໄຊສະມາດເທັກ ຈຳກັດຜູ້ດຽວ ເພື່ອຈັດຕັ້ງປະຕິບັດຮ່ວມກັນ ຕາມຄວາມເໝາະສົມ, ອາຍຸ ໂຄງການ ເວລາ 25 ປີ.

5.1.2. ແຕ່ງຕັ້ງ ບໍລິສັດ ຝ່າຍ (ຂ) ເປັນຄະນະຮັບຜິດຊອບໃນການລົງກວດກາ ແລະ ປະເມີນ ໂຄງການ ບັນດາຮ້ານທີ່ປະກອບອາຊີບ ແລະ ພາຫະນະ ກ່ອນຈະຫັນເຂົ້າສູ່ລະບົບເພື່ອຄຸ້ມຄອງຕາມລະບຽບການ.

5.1.3. ສະໜອງຂໍ້ມູນ ກ່ຽວກັບພື້ນທີ່ ປະກອບອາຊີບ ແລະ ພາຫະນະພິເສດ ໃຫ້ບໍລິສັດ ເພື່ອຕອບສະໜອງ ໃນການຈັດຕັ້ງປະຕິບັດ ພັດທະນາ ລະບົບຄຸ້ມຄອງ ອາຊີບ ແລະ ພາຫະນະພິເສດ ດ້ວຍລະບົບທີ່ທັນສະໄໝ.

5.1.4. ອຳນວຍ ຄວາມສະດວກ ແລະ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຕາມແຜນການ ຂອງ ໂຄງການທີ່ວາງໄວ້.

5.1.5. ມີສິດ ກວດກາ ເຄື່ອນໄຫວ ຂອງບໍລິສັດ (ຝ່າຍ ຂ)

5.1.6. ມີສິດໃນການເລັ່ງທວງ ການປະຕິບັດສັນຍາ ສະບັບນີ້ ຢ່າງເຂັ້ມງວດ.

**5.2. ໜ້າທີ່ ແລະ ສິດ (ຝ່າຍ ຂ).**

5.2.1. ບໍລິສັດ ຝ່າຍ (ຂ) ມີໜ້າທີ່ ລົງທຶນ ສ້າງລະບົບ ຄຸ້ມຄອງອາຊີບ ແລະ ພາຫະນະພິເສດ ດ້ວຍລະບົບທີ່ທັນສະໄໝ ທັງໝົດ.

5.2.2. ບໍລິສັດ ຝ່າຍ (ຂ) ເປັນຜູ້ຮັບຜິດຊອບ ການລົງທຶນ ທັງໝົດພາຍໃນການ ດຳເນີນ ໂຄງການ ຈົນກວ່າຈະສິ້ນສຸດສັນຍາ.

5.2.3. ຝ່າຍ (ຂ) ມີໜ້າທີ່ ປະເມີນ, ວິເຄາະ ດ້ານວິຊາສະເພາະ ແລະ ມີສິດໃນການ ປະກອບສ່ວນ ໃນການລົງນາມ ຕາມແບບຟອມ ໃນການຂໍອະນຸຍາດ ດຳເນີນ ທຸລະກິດ ອາຊີບ ແລະ ພາຫະພິເສດ ຮ່ວມ ກັບກອງບັນຊາການ ປກສ ນະຄອນຫຼວງວຽງຈັນ.

5.2.4. ບໍລິສັດ ຝ່າຍ (ຂ) ມີໜ້າທີ່ ໃນການສ້າງລະບົບ ການເກັບລາຍຮັບ ຕາມ ນິຕິກຳ 05/ປກສ, ລົງວັນທີ 23 ກຸມພາ 2022 ແລ້ວ ນາມາສະເໜີ ຄົ້ນຄວ້າຮ່ວມກັນ ກັບ (ຝ່າຍ ກ) ແລະ ສ້າງບົດບັນທຶກ ຮ່ວມກັນ.

5.2.5. ບໍລິສັດ ຝ່າຍ (ຂ) ມີສິດຮ້ອງຟ້ອງ ຄວາມເປັນທຳ ໃນກໍລະນີຄູ່ສັນຍາ ບໍ່ປະຕິບັດຕາມສັນຍາສະບັບນີ້

5.2.6. ບໍລິສັດ ຝ່າຍ (ຂ) ມີສິດໃນການເລັ່ງທວງ ການປະຕິບັດສັນຍາ ສະບັບນີ້ ຢ່າງເຂັ້ມງວດ.

5.2.7. ບໍລິສັດ ຝ່າຍ (ຂ) ມີສິດໃນການຮັບຜົນປະໂຫຍດ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 06 ຂອງສັນຍາສະບັບນີ້

5.2.8. ບໍລິສັດ ຝ່າຍ (ຂ) ມີສິດ ນຳເອົາ ບໍລິສັດຮັກສາຄວາມປອດ (ລປພ) ເຂົ້າຮັກສາຄວາມສະຫງົບໃນບັນດາຮ້ານ ທີ່ເຂົ້າໃນການຄຸ້ມຄອງລະບົບທີ່ທັນສະໄໝ

**ມາດຕາ 6: ວ່າດ້ວຍ ການແບ່ງປັນຜົນປະໂຫຍດ.**

6.1. ການແບ່ງປັນຜົນປະໂຫຍດ ແມ່ນປະຕິບັດຕາມການສະຫຼຸບ ຕົວຈິງ ໃນການເກັບລາຍຮັບ ແລະ ການສະຫຼຸບ ຂອງບັນຊີການເງິນ ໃນແຕ່ລະເດືອນ.

6.2. ການແບ່ງປັນຜົນປະໂຫຍດ (ຝ່າຍ ກ) ໄດ້ຮັບ 70% (ຝ່າຍ ຂ) ໄດ້ຮັບ 30 %

6.3. ການແບ່ງປັນຜົນປະໂຫຍດ ແມ່ນໃຫ້ຖືເອົາ ທຸກວັນທີ 30 ຂອງແຕ່ລະເດືອນ.



Scanned with CamScanner

**ມາດຕາ 7: ຂໍ້ຫ້າມ ຂອງສັນຍາ.**

ໃນໄລຍະ ການຈັດຕັ້ງປະຕິບັດ ສັນຍາສະບັບນີ້ ຖ້າມີການປ່ຽນແປງ ຂອງຝ່າຍລັດ ບໍລິຫານ ຫຼື ກົງຈັກການຈັດຕັ້ງ ຂອງກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ແມ່ນບໍ່ມີສິດປ່ຽນແປງສັນຍາສະບັບນີ້ ເວັ້ນເສຍແຕ່ສັນຍາສະບັບນີ້ເປັນໂມຄະ ຫຼື ທັງສອງຝ່າຍ ເຫັນດີຕົກລົງປ່ຽນແປງຮ່ວມກັນ.

ໃນໄລຍະ ເວລາ ປະຕິບັດສັນຍາສະບັບນີ້ ຝ່າຍ (ກ) ແລະ ຝ່າຍ (ຂ) ຈະຕ້ອງປະຕິບັດໜ້າທີ່ຄຽງຄູ່ກັນໄປແຕ່ພຽງສອງຝ່າຍເທົ່າ ບໍ່ອະນຸຍາກໃຫ້ບໍລິສັດອື່ນມາຮ່ວມນຳ.

**ມາດຕາ 8: ຂໍ້ຜູກພັນສັນຍາ.**

8.1. ພາຍຫຼັງທີ່ໄດ້ເຊັນສັນຍາກັນແລ້ວ (ຝ່າຍ ຂ) ຫາກບໍ່ ດາເນີນໂຄງການ ພາຍໃນ 60 ວັນ (ຝ່າຍ ກ) ຈະອອກແຈ້ງການເຕືອນເປັນລາຍລັກອັກສອນ ໃຫ້ (ຝ່າຍ ຂ) ຮັບຊາບ, ຈາກນັ້ນ ເວລາ 03 ເດືອນບໍ່ຈັດຕັ້ງປະຕິບັດ ຈະໄດ້ຍົກເລີກສັນຍາທັນທີ ໂດຍທີ່ບໍ່ມີເງື່ອນໄຂໃດທັງສິ້ນ.

8.2. ເມື່ອ (ຝ່າຍ ຂ) ໄດ້ດຳເນີນກິດຈະການແລ້ວ ຄິດຈະຍົກເລີກສັນຍາ ດ້ວຍເຫດຜົນອັນ ຈຳເປັນໃດໜຶ່ງ (ຝ່າຍ ກ) ຈະບໍ່ຊົດເຊີຍ ຫຼື ໄລ່ລຽງມູນຄ່າ ການລົງທຶນໃດໆໃຫ້, ເມື່ອສັນຍາ ໄດ້ຈັດຕັ້ງປະຕິບັດຄົບຕາມ ກຳນົດເວລາແລ້ວ (ຝ່າຍ ກ) ຈະບໍ່ອະນຸຍາດ ໃຫ້ (ຝ່າຍ ຂ) ຮື້ຖອນລະບົບ ຖົ່ມຄອງ ແລະ ອຸປະກອນເຄື່ອງມືຮັບໃຊ້ ເມື່ອປະຕິບັດຄົບສັນຍາແລ້ວ ຫາກບໍ່ຕໍ່ສັນຍາ, ດ້ານລະບົບ ແລະ ອຸປະກອນຕ່າງໆທັງໝົດຈະຕົກເປັນຂອງ (ຝ່າຍ ກ).

8.3. ເມື່ອໂຄງການ ດຳເນີນກິດຈະການໄປແລ້ວ ຫາກເຫັນວ່າສັນຍາບໍ່ສອດຄ່ອງ ກັບສະພາບຄວາມເປັນຈິງ ຂອງລະບຽບກົດໝາຍ ສປປລາວ ແລະ ກົດໝາຍວ່າດ້ວຍຂໍ້ຜູກພັນສັນຍາ ສອງຝ່າຍ ຈະໄດ້ພ້ອມກັນປັບປຸງສັນຍາ ໂດຍເຮັດສັນຍາເພີ່ມເຕີມຂຶ້ນອີກໜຶ່ງສະບັບ ໂດຍກຳນົດເອົາ 05 ປີໃດໃຫ້ມີການປັບປຸງເທື່ອໜຶ່ງ ບົນພື້ນຖານການຕົກລົງເຫັນດີເປັນເອກະພາບນຳກັນທັງສອງຝ່າຍ.

**ມາດຕາ 9: ການໂອນ ຫຼື ຂາຍຮຸ້ນ.**

ໃນຊ່ວງໄລຍະ ການປະຕິບັດສັນຍາ, ກໍລະນີ ຝ່າຍ (ຂ) ຫາກມີຈຸດປະສົງຈະໂອນຮຸ້ນ ຫຼື ສົບທອດຮຸ້ນໃຫ້ບຸກຄົນອື່ນ ກໍ່ມີສິດປະຕິບັດໄດ້ ແຕ່ຕ້ອງໄດ້ປຶກສາຫາລື ເຫັນດີເປັນເອກະພາບ ທັງສອງຝ່າຍ ແລະ ຖືເອົາກົດໝາຍວ່າດ້ວຍວິຊາສະຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2023 ພາກທີ V ໝວດ 2 ມາດຕາ 19 ຈຶ່ງປະຕິບັດໄດ້.

**ມາດຕາ 10: ການຍົກເລກສັນຍາ.**

**ສັນຍາຍົກເລີກ ຍ້ອນສາເຫດດັ່ງນີ້:**

10.1. ຄົບອາຍຸທີ່ໄດ້ກຳນົດໄວ້ໃນສັນຍາ ແລ້ວບໍ່ຕໍ່ສັນຍາ.

10.2. ໄດ້ບັນລຸວັດຖຸປະສົງຂອງກິດຈະກຳແລ້ວ.

10.3. ທັງສອງຝ່າຍໆ (ກ) ແລະ ຝ່າຍ (ຂ) ຕົກລົງຍຸບເລີກ ກ່ອນອາຍຸຂອງໂຄງການ.

10.4. ເຄື່ອນໄຫວບໍ່ໄດ້ຕາມວັດຖຸປະສົງ ຂາດທຶນລຽນກັນ 5 ປີ

10.5. ຄຳຕັດສິນ ຂອງສານໃຫ້ຍຸບເລີກ

10.6. ການລົ້ມລະລາຍ.

**ມາດຕາ 11: ການລົ້ມລະລາຍ**

ໂຄງການຈະຖືກລົ້ມລະລາຍດ້ວຍເງື່ອນໄຂດັ່ງນີ້:

11.1. ບໍ່ສາມາດຟື້ນຟູ ກິດຈະການຄືນໃໝ່ໄດ້.

11.2. ບໍ່ສາມາດໃຊ້ແທນໜີ້ສິນໄດ້

11.3. ເຈົ້າໜີ້ບໍ່ມີແຜນຟື້ນຟູ ກິດຈະການຄືນໃໝ່ໄດ້

11.4. ການຟື້ນຟູ ວິສະຫະກິດໃໝ່ ບໍ່ມີປະສິດທິຜົນ.

**ມາດຕາ 12: ການແກ້ໄຂ ຂໍ້ຂັດແຍງ**



Scanned with CamScanner

ກໍລະນີ ເກີດມີຂໍ້ຂັດແຍ່ງ ລະຫວ່າງຄູ່ສັນຍາ ທັງສອງຝ່າຍ ແມ່ນຈະຖືເອົາ ການໄກ່ເກ່ຍ ດ້ວຍສັນຕິວິທີ ດ້ວຍວິທີການປຶກສາຫາລືກັນກ່ອນ ໃນກໍລະນີຫາກບໍ່ສາມາດຢຸດຕິຂໍ້ຂັດແຍ່ງນັ້ນໄດ້ ກໍເຂົ້າສູ່ຂະບວນການຍຸຕິທຳ ໃຫ້ປະຕິບັດຕາມກົດໝາຍ ຂອງ ສປປ ລາວ, ຄຳວິນິໄສ ຂອງອຳນາດຕຸລາການ ຖືວ່າເປັນອັນສິ້ນສຸດຂອງຂໍ້ຂັດແຍ່ງ.

**ມາດຕາ 13: ການປົກປ້ອງສັນຍາ**

13.1. ສັນຍາສະບັບນີ້ສ້າງຂຶ້ນ ຢູ່ພາຍໃຕ້ກົດໝາຍ, ໄດ້ຮັບປະກັນຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ທຸກປະການ.

13.2. ສັນຍາສະບັບນີ້ ມີຜົນບັງຄັບໃຊ້ໄດ້ກໍຕໍ່ເມື່ອ ໂຄງການໄດ້ຖືກສ້າງຂຶ້ນ ແລະ ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ສັນຍາທັງສອງຝ່າຍ ໄດ້ລົງນາມເຊັນສັນຍາຮ່ວມກັນ ຢ່າງເປັນທາງການ.

13.3. ສັນຍາສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫ້ອງ ພະລາທິການ**
**ຝ່າຍ (ກ)**

ທອງສອນ ສຸພາບມີໄຊ
Thongsone SOPHARPMIXAY

**ບໍລິສັດ ໂຊສະມາດເທັກ ຈຳກັດຜູ້ດຽວ**
**ຝ່າຍ (ຂ)**

ນ. ສຸດາວັນ ສຸກຂະສິງ

**ຫ້ອງຄຸ້ມຄອງ ສຳນະໂນຄົວ ແລະ ກໍ່ສ້າງຮາກຖານ**

ເຂັມພອນ ນາມວົງສາ
Khemphone NAMVONGSA

**ຫ້ອງການ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ**

**ພັທ ປທ ສົມເພັດ ທຳມະທອງ**
**Lt.col.Mol.Sompheth THAMMATHONG**
**ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ**

ແສງທອງ ເກື້ອບຸນລ່ຳ
Songthong KEUABOUNLAM



Scanned with CamScanner